ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມນໍ້າປະປາ

ເລກທີ: 06641 /ຍທຂ.ກນປ
ລົງວັນທີ: 01 APR 2019

# ການແບ່ງຄວາມຮັບຜິດຊອບ ວຽກງານວິຊາສະເພາະຕາມທິດສາມສ້າງ ລະຫວ່າງ ກົມນໍ້າປະປາ ກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ

| ກົມນໍ້າປະປາຮັບຜິດຊອບ | ພະແນກ ຍທຂ ແຂວງ ແລະ ນະຄອນຫລວງວຽງຈັນ ຮັບຜິດຊອບ |
|---|---|
| 1) ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ແຜນຍຸດທະສາດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບ ວຽກງານນໍ້າປະປາ ແລະ ສຸຂະພິບານ ໃຫ້ເລິກເຊິ່ງ; | 1) ຈັດຕັ້ງເຜີຍແຜ່ ຜັນຂະຫຍາຍເນື້ອໃນກົດໝາຍ, ດຳລັດ, ມະຕິຕົກລົງ, ຄຳສັ່ງ, ແຈ້ງການ, ກົດລະບຽບ, ກຳນົດໝາຍ, ມາດຖານເຕັກນິກ ແລະ ລາຄາທີ່ວໜ່ອຍ ຕາມສູດຄິດໄລ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກໍ່ຄືລັດຖະບານວາງອອກ; |
| 2) ສ້າງແຜນຍຸດທະສາດ ແລະ ນະໂຍບາຍ, ແຜນການ, ແຜນງານ ແລະ ໂຄງການລະອຽດໃນແຕ່ລະໄລຍະ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດ ກ່ຽວກັບວຽກງານນໍ້າປະປາ ແລະ ສຸຂະພິບານ ໃນຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ເພື່ອນຳສະເໜີຕໍ່ລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງ; | 2) ຂຶ້ນແຜນຄວາມຕ້ອງການພະນັກງານ, ປະເມີນຜົນຄວາມອາດສາມາດ, ກຳນົດແຜນບຳລຸງສ້າງພະນັກງານ ໃຫ້ສອດຄ່ອງກັບຄວາມຕ້ອງການ ຂອງຂະແໜງການໃນແຕ່ລະໄລຍະ; |
| 3) ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ-ລັດ ກໍຄືຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບວຽກງານນໍ້າປະປາ ແລະ ສຸຂະພິບານໃນຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ; | 3) ປະສານສົມທົບ ກັບກົມນໍ້າປະປາ ໃນການຜັນຂະຫຍາຍຍຸດທະສາດ ຂອງຂະແໜງການໃຫ້ເປັນແຜນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ສຳລັບແຂວງຂອງຕົນ ແລະ ໂຄງການບູລິມະສິດ ໃນການພັດທະນາວຽກງານນໍ້າປະປາ ແລະ ສຸຂະພິບານ ຢູ່ພາຍໃນແຂວງ ແລະ ນະຄອນຫລວງວຽງຈັນ ໂດຍຜ່ານການເຫັນດີຂອງ ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫລວງວຽງຈັນ ແລ້ວນຳສະເໜີຕໍ່ລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ; |
| 4) ຄົ້ນຄວ້າຮ່າງ ນະໂຍບາຍ, ກົດໝາຍ, ລະບຽບການ, ຂໍ້ກຳນົດກົດລະບຽບ, ກຳນົດໝາຍ ແລະ ມາດຕະຖານເຕັກນິກ ກ່ຽວກັບ ວຽກງານນໍ້າປະປາ ແລະ ສຸຂະພິບານ ລວມທັງວຽກງານດັດສົມທຸລະກິດນໍ້າປະປາ ທີ່ເຫັນວ່າຈຳເປັນ ແລະ ຍັງອັດຕັນ ໃຫ້ສອດຄ່ອງກັບທິດສາມສ້າງ; | 4) ຮັບຜິດຊອບຂຶ້ນແຜນ ແລະ ຈັດຕັ້ງປະຕິບັດໂຄງການສຶກສາຄວາມເປັນໄປໄດ້ ເພື່ອສະເໜີຂໍອະນຸມັດງົບປະມານ ໃນການພັດທະນາລະບົບນໍ້າປະປາ ແລະ ສຸຂະພິບານຕົວເມືອງນ້ອຍ ທີ່ເກີດຂຶ້ນໃໝ່ໃນຊົນນະບົດ, ບ້ານໃຫຍ່ທີ່ມີແນວໂນ້ມກາຍເປັນຕົວເມືອງນ້ອຍ ໃນຂອບເຂດແຂວງ ແລະ ນະຄອນຫລວງວຽງຈັນ ຮັບຜິດຊອບ, ເປັນເຈົ້າການຈັດຕັ້ງປະຕິບັດ ໂຄງການທີ່ໄດ້ຮັບການອະນຸມັດງົບປະມານຈາກສະພາປະຊາຊົນແຂວງ ແລະ ໂຄງການທີ່ກົມນໍ້າປະປາ, ກະຊວງ ຍທຂ ມອບໂອນໄປໃຫ້ທ້ອງຖິ່ນຈັດຕັ້ງປະຕິບັດ; |

| | |
|---|---|
| 5) ຂຶ້ນແຜນກຳນົດສຶກສາອົບຮົມ, ສ້າງບົດແນະນຳ ຫຼືຄູ່ມືການນຳໃຊ້ກຳນົດໝາຍສຸດຄິດໄລ່ລາຄາຫົວໜ່ວຍ, ມາດຕະຖານເຕັກນິກ, ລະບຽບການປະມູນຕ່າງໆ ແລະ ປຶ້ມຄູ່ມືຕ່າງໆ ທີ່ກ່ຽວຂ້ອງກັບຂະແໜງການນ້ຳປະປາ ແລະ ສຸຂະພິບານ ໃຫ້ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ; | 5) ຢັ້ງຢືນ ຮັບຮອງ ການສຳຫຼວດ-ອອກແບບ, ມູນຄ່າໂຄງການກໍ່ສ້າງ ຫລື ສ້ອມແປງລະບົບນ້ຳປະປາ, ຂໍອະນຸຍາດດຳເນີນທຸລະກິດນ້ຳປະປາ ແລະ ສຸຂະພິບານ ຕາມການສະເໜີມາຈາກພາກສ່ວນທີ່ກ່ຽວຂ້ອງ; |
| 6) ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂະພິບານ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ, ເພື່ອກໍ່ສ້າງ, ບຳລຸງ ແລະ ຍົກລະດັບພະນັກງານ ພ້ອມທັງຍາດແຍ່ງການຊ່ວຍເຫຼືອລ້າ ແລະ ກູ້ຢືມ ເຂົ້າໃນການພັດທະນາ; | 6) ຮັບຜິດຊອບໃນການປະເມີນຜົນ ປະສິດທິຜົນທາງດ້ານເຕັກນິກ-ເສດຖະກິດ ຂອງລັດວິສາຫະກິດ ນ້ຳປະປາແຂວງ, ລາຍງານຜົນການປະເມີນຜົນ ໃຫ້ແກ່ກົມນ້ຳປະປາ ເພື່ອຮັບຊາບ ແລະ ຕິດຕາມ; |
| 7) ຄຸ້ມຄອງການພັດທະນາ, ປັບປຸງ ແລະ ຂະຫຍາຍ ລະບົບໂຄງລ່າງນ້ຳປະປາ ແລະ ສຸຂະພິບານ ຢູ່ຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ; | 7) ຄົ້ນຄວ້າ ແລະ ພິຈາລະນາມີຄຳເຫັນຕໍ່ແຜນດຳເນີນທຸລະກິດ ສຳລັບ 3 ປີ ຂອງລັດວິສາຫະກິດ ແລະ ນຳສະເໜີແຜນດັ່ງກ່າວໃຫ້ສະພາບໍລິຫານ ລັດວິສາຫະກິດຮັບຮອງ; |
| 8) ດັດສົມການດຳເນີນທຸລະກິດ ຂອງຜູ້ບໍລິການນ້ຳປະປາ ຕາມກົດໝາຍ ແລະ ລະບຽບການ, ກຳນົດໝາຍ ແລະ ມາດຕະຖານເຕັກນິກ, ຕົວຊີ້ວັດຜົນການປະຕິບັດງານ ທີ່ກະຊວງ ວາງອອກ; | 8) ພິຈາລະນາ ຂໍອະນຸຍາດສ້າງຕັ້ງ ແລະ ສະເໜີລົບລ້າງ ຫົວໜ່ວຍທຸລະກິດ ດຳເນີນທຸລະກິດ ສຳຫຼວດ-ອອກແບບ,ກໍ່ສ້າງ, ສ້ອມແປງລະບົບນ້ຳປະປາ ແລະ ສຸຂະພິບານ ໃນແຕ່ລະປີ; |
| 9) ຄຸ້ມຄອງ, ຕິດຕາມກວດກາ ແລະ ກວດການ ການເຄື່ອນໄຫວ ຂອງບັນດາພະແນກ, ຫົວໜ່ວຍວິຊາການ ແລະ ໂຄງການ ທີ່ຂຶ້ນກັບກົມ; ກວດກາ, ປະເມີນຜົນ, ຊຸກຍູ້ ແລະ ຊ່ວຍໜູນ ຂະແໜງສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ໂຄງການ ແລະ ວຽກງານຕ່າງໆ ໃຫ້ຖືກຕ້ອງ ແລະ ໄດ້ຮັບຜົນດີ; | 9) ພິຈາລະນາໃຫ້ຄຳເຫັນ ຂໍອະນຸຍາດໃຫ້ສຳປະທານ ການກໍ່ສ້າງລະບົບນ້ຳປະປາ ແລະ ສຸຂະພິບານ, ການບໍລິການ ຕາມການສະເໜີມາຈາກພາກສ່ວນກ່ຽວຂ້ອງ; |
| 10) ເກັບກຳ ແລະ ສ້າງຖານຂໍ້ມູນ ທາງດ້ານສະຖິຕິ ແລະ ຂ່າວສານ ເພື່ອຄຸ້ມຄອງ ແລະ ນຳໃຊ້ເຂົ້າໃນການວາງແຜນ ແລະ ພັດທະນາຂະແໜງຕົນ; | 10) ພິຈາລະນາໃຫ້ຄຳເຫັນ ຂໍອະນຸຍາດລົງທຶນສຳປະທານ ການກໍ່ສ້າງໂຮງງານຜະລິດນ້ຳປະປາເພື່ອຂາຍຍົກ ຕາມການສະເໜີມາຈາກພາກສ່ວນທີ່ກ່ຽວຂ້ອງ; |

| | |
|---|---|
| 11) ປະກອບຄຳເຫັນຢັ້ງຢືນ ຮັບຮອງການສຳຫຼວດ-ອອກແບບ ມູນຄ່າໂຄງການກໍ່ສ້າງ ຫຼືສ້ອມແປງ ລະບົບນ້ຳປະປາ, ຂໍອະນຸຍາດ ດຳເນີນທຸລະກິດນ້ຳປະປາ ແລະ ສຸຂະພິບານ ຕາມການສະເໜີມາຈາກພາກສ່ວນກ່ຽວຂ້ອງ. | 11) ຮັບຜິດຊອບໃນການປະມູນການຈັດຊື້-ຈັດຈ້າງ ຫຼືເຈລະຈາ ແລະ ການຈັດຕັ້ງປະຕິບັດໂຄງການກໍ່ສ້າງນ້ຳປະປາ ແລະ ສຸຂະພິບານ ໃນຂອບເຂດໃນຄວາມຮັບຜິດຊອບຂອງຕົນ; |
| 12 ສະເໜີຕັດອອກເພາະເປັນພາລະບົດບາດຂອງພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນຜູ້ອະນຸຍາດ. | 12) ຄົ້ນຄ້ວາ ແລະ ນຳສະເໜີ ກະຊວງ ໃນການປັບປຸງ ແລະ ດັດປັບລາຄານ້ຳປະປາ ຕາມຄວາມຈຳເປັນ ໃຫ້ສອດຄ່ອງກັບສະພາບຕົວຈິງ; |
| 13) ຄົ້ນຄວ້າມີຄຳເຫັນ ກ່ຽວກັບການລົງທຶນສຳປະທານ ກໍ່ສ້າງລະບົບນ້ຳປະ ປາ ແລະ ສຸຂະພິບານ, ການບໍລິການ ຕາມການສະເໜີຈາກ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ; | 13) ຂຶ້ນແຜນປະສານສົມທົບ ກັບພະແນກທີ່ກ່ຽວຂ້ອງ. ຊຸມຊົນ ແລະ ບັນດາບ້ານໃນເຂດອ່າງໂຕ່ງນ້ຳ. ປ່າຍອດນ້ຳ ເພື່ອປົກປັກຮັກສາແຫລ່ງນ້ຳໃຫ້ຍືນຍົງ; |
| 14) ພິຈາລະນາໃຫ້ຄຳເຫັນ ຂໍອະນຸຍາດສຳປະທານ ການກໍ່ສ້າງໂຮງງານຜະລິດນ້ຳປະປາ ເພື່ອຂາຍຍົກຕາມການສະເໜີຕາມພາກສ່ວນທີ່ກ່ຽວຂ້ອງ; | 14) ມີໜ້າທີ່ເກັບກຳສະຖິຕິ ລາຍງານ ການເຂົ້າເຖິງນ້ຳປະປາ ແລະ ສຸຂະພິບານພາຍໃນ ແຂວງຂອງຕົນ ແລະ ລາຍງານຄວາມຄືບໜ້າດັ່ງກ່າວ ໃຫ້ກົມນ້ຳປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ, ຄະນະນຳຂອງແຂວງ ແລະ ນະຄອນຫລວງວຽງຈັນ ໃນແຕ່ລະໄລຍະ 6 ເດືອນ ແລະ ປີ; |
| 15) ຮັບຜິດຊອບໃນການປະມູນ ຈັດຊື້-ຈັດຈ້າງ ຫຼືເຈລະຈາ ແລະ ຈັດຕັ້ງປະຕິບັດໂຄງການກໍ່ສ້າງນ້ຳປະປາ ແລະ ສຸຂະພິບານ ໃນຂອບເຂດຮັບຜິດຊອບຂອງຕົນ; | 15) ຊຸກຍູ້, ປຸລະດົມ ແລະ ສ້າງຈິດສານຶກໃຫ້ປະຊາຊົນ ປ່ຽນພຶດຕິກຳຖ່າຍຊະຊາຍມາສ້າງວິດຖ່າຍ ແລະ ນຳໃຊ້ວິດຖ່າຍໃຫ້ທົ່ວເຖິງ, ເປັນເຈົ້າການນຳພາຂະບວນການ ຈັດຕັ້ງປະຕິບັດໜ້າວຽກການພັດທະນາບ້ານ, ຄອບຄົວອະນາໄມ, ລົບລ້າງການຖ່າຍຊະຊາຍຢູ່ບ້ານ, ເມືອງ (ເປັນບ້ານ ແລະ ເມືອງ ລົບລ້າງການຖ່າຍຊະຊາຍ) ແລະ ການອະນາໄມ 3 ສະອາດຂອງປະຊາຊົນທົ່ວໜ້າ. |
| 16) ສະຫຼຸບ, ຕີລາຄາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການ ແລະ ງົບປະມານ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂະພິບານ. | 16) ພົວພັນຮ່ວມມືກັບພາກສ່ວນກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງທຶນຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະ ນາວຽກງານນ້ຳປະປາ ແລະ ສຸຂາພິບານ. |

ຫົວໜ້າກົມ ນ້ຳປະປາ

ພົມມາ ແອວລາວັນ

ຫົວໜ້າພະແນກ

ຫົວໜ້າພະແນກ ຍທຂ ນະຄອນຫຼວງວຽງຈັນ: ..........................................

ການແບ່ງຄວາມຮັບຜິດຊອບ ວຽກງານວິຊາສະເພາະຕາມທິດສາມສ້າງ ລະຫວ່າງ ກົມນ້ຳປະປາ ກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ

ຫົວໜ້າພະແນກ ຍທຂ ແຂວງ ຜົ້ງສາລີ : ........................................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງນ້ຳທາ : ........................................

ຫົວໜ້າພະແນກ ຍທຂ ແຂວງ ອຸດົມໄຊ : ........................................

ຫົວໜ້າພະແນກ ຍທຂ ແຂວງ ບໍ່ແກ້ວ : ........................................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງພະບາງ : ........................................

ຫົວໜ້າພະແນກ ຍທຂ ແຂວງ ຊຽງຂວາງ : ........................................

ຫົວໜ້າພະແນກ ຍທຂ ແຂວງ ຫົວພັນ : ........................................

ຫົວໜ້າພະແນກ ຍທຂ ແຂວງ ໄຊຍະບູລີ : ........................................

ຫົວໜ້າພະແນກ ຍທຂ ແຂວງ ວຽງຈັນ : ........................................

ຫົວໜ້າພະແນກ ຍທຂ ແຂວງ ໄຊສົມບູນ : ........................................

ຫົວໜ້າພະແນກ ຍທຂ ແຂວງ ບໍລິຄຳໄຊ : ........................................

ຫົວໜ້າພະແນກ ຍທຂ ແຂວງ ຄຳມ່ວນ : ........................................

ຫົວໜ້າພະແນກ ຍທຂ ແຂວງ ສະຫວັນນະເຂດ: ........................................

ຫົວໜ້າພະແນກ ຍທຂ ແຂວງ ຈຳປາສັກ : ....................................

ຫົວໜ້າພະແນກ ຍທຂ ແຂວງ ສາລະວັນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ເຊກອງ : ....................................

ຫົວໜ້າພະແນກ ຍທຂ ແຂວງອັດຕະປື : ....................................